# ໃບຍິນຍອມເຫັນດີເຂົ້າປະກອບສ່ວນຮ່ວມໃນການຄົ້ນຄ້ວາ

ທ່ານກໍາລັງໄດ້ຖືກຮ້ອງຂໍ ໃຫ້ເຂົ້າປະກອບສ່ວນຮ່ວມໃນວຽກງານການສຶກສາຄົ້ນຄ້ວາ.

ກ່ອນທີ່ທ່ານຈະເຫັນດີ ແລະຕົກລົງ, ຜູ້ສືບສວນຕ້ອງບອກໃຫ້ທ່ານໄດ້ຮູ້ ກ່ຽວກັບ (1)ຈຸດປະສົງ, ວິທີການດໍາເນີນງານຕ່າງໆ ແລະການໃຊ້ເວລາຂອງການຄົ້ນຄ້ວາ.(2) ການດໍາເນີນງານໃດນຶ່ງ ທີ່ມີລັກສນະທົດລອງ. (3) ຄວາມເປັນອັນຕຣາຍທີ່ສາມາດມອງເຫັນໄດ້ລ່ວງໜ້າຢ່າງມີເຫດຜົນ, ການບໍ່ສບາຍຕົວຕ່າງໆ ແລະຜົນປໂຍດຕ່າງໆຂອງການຄົ້ນຄ້ວາ. (4) ການດໍາເນີນງານ ຫຼືການປິ່ນປົວໃດນຶ່ງ ທີ່ມີລັກສນະສໍາຮອງຊຶ່ງເຊື່ອງຊ້ອນເຖິງຄວາມອາດສາມາດ ແລະ (5) ຄວາມລັບຈະຮັກສາໄວ້ແນວໃດ.

ເຂົ້າກັບກໍຣະນີ, ຜູ້ສືບສວນຕ້ອງບອກໃຫ້ທ່ານໄດ້ຮູ້ເຊັ່ນດຽວກັນກ່ຽວກັບ (1) ການຊົດເຊີຍໃດນຶ່ງທີ່ເປັນໄປໄດ້ ຫຼືການປິ່ນປົວຮັກສາທາງດ້ານພຍາບານ ຖ້າຫາກໄດ້ຮັບການບາດເຈັບ.(2) ຄວາມອາດເປັນໄປໄດ້ ຂອງພັຍອັນຕຣາຍທີ່ສາມາດມອງເຫັນໄດ້ລ່ວງໜ້າ. (3) ສພາບແວດລ້ອມຕ່າງໆ ໃນເມື່ອຜູ້ສືບສວນອາດງົດການເຂົ້າປະກອບສ່ວນຂອງທ່ານ. (4) ບອກຄວາມເສັຽຫາຍໃຫ້ແກ່ທ່ານຕື່ມ. (5) ມີຫຍັງທີ່ຈະເກີດຂຶ້ນຖ້າຫາກທ່ານຢຸດເຊົາບໍ່ປະກອບສ່ວນ. (6) ເວລາທ່ານໄດ້ຮັບຂ່າວກ່ຽວກັບໝາກຜົນຂອງການຄົ້ນຄ້ວາ ທີ່ອາດຈະເຮັດໃຫ້ທ່ານຢາກຖອນຈາກການຮ່ວມມື, ແລະ (7) ມີຄົນຈັກຄົນທີ່ຈະເຂົ້າຮ່ວມໃນການສຶກສາຄົ້ນຄ້ວາ.

ຖ້າຫາກທ່ານຕົກລົງທີ່ຈະປະກອບສ່ວນເຂົ້າຮ່ວມ, ທ່ານຕ້ອງໄດ້ຮັບສໍາເນົາຂອງເອກກະສານສບັບນີ້ທີ່ໄດ້ເຊັນໄວ້ແລ້ວ ແລະບົດສລຸບຄວາມທີ່ຂຽນເປັນລາຍລັກອັກສອນຂອງການຄົ້ນຄ້ວາ.

ທ່ານອາດຈະຕິດຕໍ່ ແລະພົວພັນກັບ ______________________________ ຕາມເລກໂທຣ໌ ______________________
ໄດ້ໃນທຸກເວລາທີ່ທ່ານມີຄໍາຖາມກ່ຽວກັບການຄົ້ນຄ້ວາ.

ທ່ານອາດຈະຕິດຕໍ່ ແລະພົວພັນກັບ ______________________________ ຕາມເລກໂທຣ໌ ______________________
ຖ້າຫາກທ່ານມີຄໍາຖາມກ່ຽວກັບສິດທິຕ່າງໆ ໃນນາມທີ່ທ່ານເປັນເປົ້າປະຕິບັດການຂອງການຄົ້ນຄ້ວາ ຫຼື ຈະເຮັດຫຍັງແດ່ຖ້າຫາກທ່ານໄດ້ຮັບການບາດເຈັບ.

ການເຂົ້າປະກອບສ່ວນຂອງທ່ານໃນການຄົ້ນຄ້ວານີ້ ແມ່ນເປັນການສມັກໃຈ, ແລະທ່ານຈະບໍ່ໄດ້ຖືກປັບໃໝ ຫຼືສູນເສັຽຜົນປໂຍດໃດໆ ຖ້າຫາກທ່ານປະຕິເສດທີ່ຈະເຂົ້າປະກອບສ່ວນຮ່ວມ ຫຼືຕັດສິນໃຈທີ່ຈະຢຸດເຊົາ.

ການເຊັນຊື່ລົງໄປໃນເອກກະສານສບັບນີ້ ໝາຍເຖິງວ່າການຄົ້ນຄ້ວາເລີ້ມປະຕິບັດການ, ລວມທັງຂໍ້ຄວາມຕ່າງໆດັ່ງຂ້າງ ເທິງນັ້ນ, ໄດ້ອະທິບາຍໃຫ້ຄວາມຣະອຽດຕໍ່ທ່ານໂດຽປາກເປົ່າ, ແລະທ່ານເອງຕົກລົງທີ່ຈະປະກອບສ່ວນເຂົ້າຮ່ວມ ຢ່າງສມັກໃຈ.

________________________________________      __________________
ລາຍເຊັນຂອງຜູ້ປະກອບສ່ວນເຂົ້າຮ່ວມ      ວັນທີ

________________________________________      __________________
ລາຍເຊັນຂອງພະຍານ      ວັນທີ